ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ /ກສ
ນະຄອນຫຼວງວຽງຈັນ, ວັນທີ ເມສາ 2018

ຮຽນ : ທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ທີ່ນັບຖື,
ເລື່ອງ : ລາຍງານການກະກຽມ ແລະ ເຂົ້າຮ່ວມງານຫາກຳກິລາເອຊຽນເກມຄັ້ງທີ 18 ແຕ່ວັນທີ 18/08-02/09/2018 ທີ່ປະເທດ ອິນໂດເນເຊຍ 2018.

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 465/ຫສນຍ.ກລຂ, ລົງວັນທີ 30/03/2018 ເຫັນດີອະນຸມັດໃຫ້ກະຊວງສຶກສາທິການ ແລະ ກິລາ ສົ່ງຄະນະນັກກິລາລາວ ເຂົ້າຮ່ວມງານມະຫາກຳກິລາເອຊຽນເກມ ຄັ້ງທີ 18 ປີ 2018 ທີ່ປະເທດອິນໂດເນເຊຍ.

ກົມກິລາລະດັບສູງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຊາບວ່າ : ການກະກຽມເຂົ້າຮ່ວມການແຂ່ງຂັນງານມະຫາກຳກິລາເອຊຽນເກມຄັ້ງທີ 18 (ລະຫວ່າງວັນທີ18/08-02/09/2018) ທີ່ປະເທດອິນໂດເນເຊຍ ເປັນເຈົ້າພາບ, ເບື້ອງຕົ້ນ ກົມກິລາລະດັບສູງ ໄດ້ກຳນົດເອົາ 12 ປະເພດກິລາ ໃນແຜນ ທີ່ນຳໃຊ້ງົບປະມານຂອງລັດ ມີຄື: ມວຍວຸ, ກະຕໍ້, ປັນຈັກສີລັດ, ເທຄວັນໂດ, ຢູໂດ, ຄາຣາເຕໂດ, ມວຍສາກົນ, ລີດຖີບ, ແລ່ນ-ລານ, ລອຍນ້ຳ, ຍິງທະນູ, ຍິກນ້ຳໜັກ ແລະ 9 ປະເພດກິລາ ຊຶ່ງບໍ່ໃຊ້ງົບປະມານຂອງລັດມີຄື : ຊໍ່ອບເຫັນນິດ, ກ໋ອຟ, ປິ່ງປ່ອງ, ບານເຕະ, ຮັກບີ້, ຍິງປືນ, ເບສບອນ, ເຈສກີ, ພາຣາມໍເຕ້ ລວມຈຳນວນພົນທັງໝົດ 287 ຄົນ ແລະ ນຳໃຊ້ງົບປະມານ 14,999,000,000 ກີບ (ສິບສີ່ຕື້ເກົ້າຮ້ອຍເກົ້າສິບເກົ້າລ້ານກີບ).

ເພື່ອປະຕິບັດຕາມທິດຊີ້ນຳ ແລະ ການຕົກລົງເຫັນດີຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 465/ຫສນຍ.ກລຂ ລົງວັນທີ 30 ມີນາ (3) 2018. ກົມກິລາລະດັບສູງ ໄດ້ສົມທົບກັບຄະນະກຳມະການກິລາໂອແລມປິກແຫ່ງຊາດລາວ, ສະຫະພັນກິລາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງປຶກສາຫາລືຄົ້ນຄວ້າ ແລະ ໄດ້ຕົກລົງເຫັນດີເປັນເອກະພາບດັ່ງນີ້ :

ຈຳນວນປະເພດກິລາໃນແຜນທີ່ນຳໃຊ້ງົບປະມານຂອງລັດ ຍັງຮັກສາໄວ້ 12 ປະເພດກິລາ ແລະ ປະເພດກິລາທີ່ບໍ່ໃຊ້ງົບປະມານຂອງລັດໃນເມື່ອກ່ອນຂຶ້ນໄວ້ 9 ປະເພດກິລາ ຍັງເຫຼືອ 8 ປະເພດກິລາ, ຈຳນວນພົນທີ່ເຂົ້າຮ່ວມໃນແຜນທີ່ຂຶ້ນໄວ້ 287 ຄົນ ຍັງເຫຼືອ 242 ຄົນ ໃນນັ້ນ 12 ປະເພດກິລາໃນແຜນງົບປະມານ ມີຈຳນວນພົນ 136 ຄົນ ແລະ 8 ປະເພດກິລານອກແຜນງົບປະມານ ແມ່ນເຫຼືອ 106 ຄົນ, ງົບປະມານຮັບໃຊ້ທີ່ຂຶ້ນໄວ້ເມື່ອກ່ອນ 14,999,000,000 ກີບ (ສິບສີ່ຕື້ເກົ້າຮ້ອຍເກົ້າສິບເກົ້າລ້ານກີບ). ປັດຈຸບັນ ຍັງເຫຼືອ 9,957,000,000 (ເກົ້າຕື້ເກົ້າຮ້ອຍຫ້າສິບເຈັດລ້ານກີບ) ທີ່ຈະສະເໜີຂໍອະນຸມັດງົບປະມານ.

Scanned with CamScanner

❖ ການຄັດເລືອກ ແລະ ເຫດຜົນປະເພດກິລາ ທີ່ຈະເຂົ້າຮ່ວມການແຂ່ງຂັນ ເອຊຽນເກມຄັ້ງທີ 18 ທີ່ ປະເທດອິນໂດເນເຊຍ

ໃນ 12 ປະເພດປະເພດກິລາທີ່ນຳໃຊ້ງົບປະມານຂອງລັດ ບໍ່ສາມາດຈະຕັດປະເພດໃດໜຶ່ງອອກຈາກການເຂົ້າຮ່ວມແຂ່ງຂັນໄດ້ ຍ້ອນວ່າ : ກິລາລິດຖິບ, ກິລາກະຕໍ້ ແລະ ກິລາຕໍ່ສູ້ປ້ອງກັນໂຕເຊັ່ນ : ກິລາວູຊູ, ກິລາເທຄວັນໂດ, ກິລາຢູໂດ, ກິລາກາຣາເຕໂດ, ກິລາປັນຈັກສີລັດ ແລະ ກິລາມວຍສາກົນ ຜ່ານມາໄດ້ສ້າງຜົນງານຍາດໄດ້ຫຼຽນຄຳ, ຫຼຽນເງິນ, ຫຼຽນທອງ ຈາກການແຂ່ງຂັນກິລາຊີເກມ, ເອຊຽນເກມ ແລະ ການແຂ່ງຂັນຊິງແຊ້ມນາໆຊາດ ລະດັບຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ. ກິລາຍົກນ້ຳໜັກ, ກິລາແລ່ນ-ລານ ແລະ ກິລາລອຍນ້ຳ ເປັນກິລາຂອງໂອແລມປິກ ຖ້າຂາດການເຂົ້າຮ່ວມແຂ່ງຂັນ ບໍ່ມີການເຄື່ອນໄຫວນຳສາກົນ ຈະບໍ່ໄດ້ຮັບການສະໜັບສະໜຸນຈາກໂອແລມປິກສາກົນ. ສ່ວນກິລານອກແຜນ 9 ປະເພດ ທີ່ສະເໜີຂໍກຸ້ມຕົນເອງໃນການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນ ລັດຖະບານຊ່ວຍແຕ່ເຄື່ອງນຸ່ງຊຸດກິລາ ເພື່ອໃຫ້ເປັນເອກະພາບກັນໝົດຂອງຄະນະນັກກິລາລາວ ເວລາອອກໄປເຄື່ອນໄຫວຕ່າງປະເທດ, ເຂົ້າຮ່ວມເພື່ອສະສົມຄະແນນ ຍາດທຶນການສະໜັບສະໜຸນຈາກໂອແລມປິກສາກົນໃນຕໍ່ໜ້າ ແລະ ປະຕິບັດພັນທະການເປັນສະມາຊິກຮ່ວມມືກັບສະຫະພັນກິລາອາຊຽນ-ອາຊີ ແລະ ສະຫະພັນກິລາສາກົນ ບວກກັບແຮງຜັກດັນຊຸກຍູ້ຈາກການຈັດຕັ້ງ, ສັງຄົມ, ບໍລິສັດຫ້າງຮ້ານຕ່າງໆ ໃນການອຸປະຖຳສະໜັບສະໜຸນໃຫ້ເຂົ້າຮ່ວມແຂ່ງຂັນ ເພື່ອການພັດທະນາ.

❖ ຕາຕະລາງການກຳນົດຈຳນວນພົນ ເຂົ້າຮ່ວມແຂ່ງຂັນກິລາເອຊຽນເກມ ຄັ້ງທີ 18 ທີ່ ປະເທດອິນໂດເນເຊຍ ແຕ່ວັນທີ 18/08/-2/09/2018

ລ/ດ	ປະເພດກິລາ	ການນຳຂັ້ນສູງ	ທຸດກິລາ	CDM	HQ	ຄະນະນຳສ/ພ	ແພດກິລາ	ຄູຝຶກ	ກ/ກ	ນັກກິລາ		ລວມ
										ຊາຍ	ຍິງ	
I.	ຄະນະນຳ-ຜູ້ຊ່ວຍວຽກ											
1.	ການນຳຂັ້ນສູງ	03										03
2.	ຄະນະມົນຕີ CDM			03								03
3.	ກອງເລຂາ HQ				08							08
4.	ແພດການຍະບຳບັດ						02					02
5.	ທຸດກິລາ		01									01
	ລວມ =	*03*	*01*	*03*	*08*		*02*					*17*
II.	ປະເພດກິລາໃຊ້ງົບປະມານຂອງລັດຮອບດ້ານ											
1.	ກະຕໍ້	-	-	-	-	01	-	04	01	12	12	30
2.	ວູຊູ	-	-	-	-	01	-	02	-	04	02	9
3.	ຄາຣາເຕໂດ	-	-	-	-	01	-	01	01	02	02	7
4.	ປັນຈັກສີລັດ	-	-	-	-	02	-	04	01	12	04	23
5.	ມວຍສາກົນ	-	-	-	-	01	-	02	-	02	02	7
6.	ຢູໂດ	-	-	-	-	01	-	02	-	03	03	9
7.	ເທຄວັນໂດ	-	-	-	-	01	-	01	01	05	03	11
8.	ລິດຖິບ	-	-	-	-	01	-	01	-	02	-	4
9.	ແລ່ນ-ລານ	-	-	-	-	01	-	01	01	02	02	7
10.	ລອຍນ້ຳ	-	-	-	-	01	-	01	-	01	01	4
11.	ຍິງທະນູ	-	-	-	-	01	-	01	-	01	01	4
12.	ຍົກນ້ຳໜັກ	-	-	-	-	01	-	01	-	01	01	4
	ລວມ =	-	-	-	-	*13*	*0*	*21*	*05*	*47*	*33*	119

Scanned with CamScanner

	ໝວດກິລາທີ່ລັດຖະບານຊ່ວຍແຕ່ຂອງຂວັນບຸກຄົນ, ຊຸດກິລາເດີນທາງໄປແຂ່ງຂັນ											
1.	ຊ້ອບເຫັນນິດ	-	-	-	-	01	-	01	-	02	02	6
2.	ກາອິຟ	-	-	-	-	01	-	01	-	04	-	6
3.	ປິງປ່ອງ	-	-	-	-	01	-	02	-	03	03	9
4.	ບານເຕະ	-	-	-	-	01	-	04	-	22	-	27
5.	ພາລາສະກາຍດິ້ງ	-	-	-	-	01	-	02	-	07	05	15
6.	ເຈສກີ	-	-	-	-	01	-	01	-	04	-	6
7.	ເບສບອນ	-	-	-	-	01	-	04	-	24	-	29
8.	ຍິງປືນ	-	-	-	-	01	-	01	-	02	04	8
	ລວມ =	-	-	-	-	*08*	-	*16*	-	*68*	*14*	*106*

❖ <u>ໝວດປະເພດກິລາທີ່ນຳໃຊ້ງົບປະມານຂອງລັດຖະບານຮອບດ້ານ ແລະ ໝວດກິລາທີ່ມອບໃຫ້ກຸ້ມຕົນເອງ ຮອບດ້ານໃນການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນ, ລັດຊ່ວຍຂອງຂວັນບຸກຄົນ, ຊຸດກິລາເດີນທາງໄປແຂ່ງຂັນ ມີ 08 ປະເພດ</u>

ກ. ໝວດກິລາທີ່ສະເໜີຂໍນຳໃຊ້ງົບປະມານຂອງລັດຖະບານຮອບດ້ານ :

ລ/ດ	ປະເພດກິລາ	ຄຸຝຶກ		ນັກກິລາ		ລວມ	ກຳນົດມື້ຝຶກແອບ	ສູນຝຶກແອບ
		ລາວ	ຕ່າງປະເທດ	ຊາຍ	ຍິງ			
1	ມວຍຈຸຊຸ	02	-	06	04	12	100 ວັນ	ສູນຝຶກກິລາແຫ່ງຊາດ
2	ກະຕໍ້	02	-	12	12	26	100 ວັນ	ເດີ່ນຮົ່ມໂອແລມປາເຊຍ
3	ປັນຈັກສີລັດ	02	-	12	08	22	100 ວັນ	ສູນຝຶກກິລາແຫ່ງຊາດ
4	ເທຄວັນໂດ	02	-	08	06	16	80 ວັນ	ເດີ່ນຮົ່ມ ບຸຢອງ
5	ຢຸໂດ	02	-	04	04	10	80 ວັນ	ເດີ່ນຮົ່ມ Budo center
6	ຄາຣາເຕໂດ	02	-	04	04	10	80 ວັນ	ເດີ່ນຮົ່ມ Budo center
7	ມວຍສາກົນ	02	-	01	04	10	80 ວັນ	ສູນຝຶກກິລາແຫ່ງຊາດ
8	ລິດຖີບ	01	-	02	-	03	80 ວັນ	ເສັ້ນທາງລຽບສາຍໃຕ້
9	ແລ່ນ-ລານ	01	-	02	02	05	60 ວັນ	ສະໜາມກິລາເຈົ້າອານຸວົງ
10	ລອຍນ້ຳ	01	-	01	01	03	60 ວັນ	ສະໜາມກິລາເຈົ້າອານຸວົງ
11	ຍິງທະນູ	01	-	01	01	03	60 ວັນ	ສູນຝຶກກິລາແຫ່ງຊາດ
12	ຍົກນ້ຳໜັກ	01	-	02	02	05	60 ວັນ	ໂຮງຮຽນພອນສະຫວັນກິລາ
ລວມ		19	0	55	48	125		

ຂ. ໝວດກິລາທີ່ມອບໃຫ້ກຸ້ມຕົນເອງຮອບດ້ານໃນການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນ, ລັດຊ່ວຍຂອງຂວັນບຸກຄົນ, ຊຸດກິລາເດີນທາງໄປແຂ່ງຂັນມີ 08 ປະເພດ :

ລ/ດ	ປະເພດກິລາ	ຄະນະນຳ ສະຫະພັນ	ຄຸຝຶກ	ກຳມະການ	ນັກກິລາ		ລວມ
					ຊາຍ	ຍິງ	
1	ຊ້ອບເຫັນນິດ	01	01	-	02	02	06
2	ກ້ອຟ	01	01	-	04	-	06
3	ປິງປ່ອງ	01	02	-	03	03	09

Scanned with CamScanner

4	ບານເຕະ	01	04	-	22	-	27
5	ຍິງປືນ	01	01	-	02	04	08
6	ເບສບອນ	01	04	-	24	-	29
7	ເຈສກີ	01	01	-	04	-	06
8	ພາຣາມໍເຕ້	01	02	-	07	05	15
ລວມ		09	20	0	80	26	135

Scanned with CamScanner

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ 166 /ກສ
ນະຄອນຫຼວງວຽງຈັນ, ວັນທີ ๒๐ ເມສາ 2018

ຜົນສຳເລັດ ແລະ ເຫດຜົນ
ໃນການສົ່ງນັກກິລາເຂົ້າຮ່ວມເອຊຽນເກມຄັ້ງທີ 18 ປີ 2018

I. ປະເພດກິລາເປົ້າໝາຍຫຼຽນ ແລະ ປະເພດກິລາທີ່ສ້າງຜົນງານໂດດເດັ່ນໃນໄລຍະຜ່ານມາມີ 12 ປະເພດກິລາ :

1. ກິລາວູຊູ ຜ່ານມາໄດ້ຫຼຽນຄຳໃນລະດັບຊີເກມຫຼາຍຄັ້ງ ແລະ ຍາດໄດ້ຫຼຽນເງິນ ແລະ ຫຼຽນທອງ ໃນລະດັບເອຊຽນເກມຫຼາຍຄັ້ງຄື :
   - ປີ 1998 ເອຊຽນເກມຄັ້ງທີ 13 ຢຸ່ບາງກອກ ປະເທດໄທ ໄດ້ 1 ຫຼຽນທອງ.
   - ປີ 2002 ເອຊຽນເກມຄັ້ງທີ 14 ຢຸ່ບຸຊານ ສ.ເກົາຫຼີ ໄດ້ 2 ຫຼຽນທອງ.
   - ປີ 2006 ເອຊຽນເກມຄັ້ງທີ 15 ຢຸ່ໂດຮາ ປະເທດກາຕາ 1 ຫຼຽນເງິນ.
   - ປີ 2010 ເອຊຽນເກມຄັ້ງທີ 16 ຢຸ່ກວາງໂຈ ສ.ປ ຈີນ ໄດ້ 2 ຫຼຽນທອງ.
   - ປີ 2014 ເອຊຽນເກມຄັ້ງທີ 17 ຢຸ່ອິນຊອນ ສ.ເກົາຫຼີ ໄດ້ 1 ຫຼຽນທອງ.

   ແຜນສົ່ງເຂົ້າຮ່ວມເອຊຽນເກມຄັ້ງທີ 18 ມີນັກກິລາຊາຍ 4 ຄົນ ແລະ ຍິງ 4 ຄົນ ຄາດໝາຍຮັກສາຫຼຽນເງິນ ແລະ ສູ້ຊົນເອົາຫຼຽນຄຳ .
2. ກິລາກະຕໍ້ : ເປັນກິລາທີ່ສ້າງກຽດຊື່ສຽງ ຜ່ານມາໄດ້ຫຼຽນຄຳຊິງແຊ້ມໂລກ, ຊິງແຊ້ມອາຊີຫຼາຍຄັ້ງ ແລະ ສາມາດຍາດໄດ້ຫຼຽນເງິນໃນກິລາເອຊຽນເກມຄັ້ງທີ 17 ປີ 2014 ທີ່ອິນຊອນ ປະເທດ ສ ເກົາຫຼີ. ແຜນສົ່ງເຂົ້າຮ່ວມເອຊຽນເກມຄັ້ງທີ 18 ນັກກິລາຊາຍ 12 ຄົນ ແລະ ຍິງ 12 ຄົນ ຄາດໝາຍຮັກສາຫຼຽນເງິນ ແລະ ສູ້ຊົນເອົາຫຼຽນຄຳ.
3. ກິລາປັນຈັກສິລັດ : ເປັນກິລາປະເພນີຂອງປະເທດທີ່ນັບຖືສາດສະໜາມຸດສະລິມ ໂດຍສະເພາະເຈົ້າພາບໄດ້ມີການຮ່ວມມືກັບລາວເປັນຢ່າງດີໃນການວາງແຜນຍາດຫຼຽນ ແລະ ຜ່ານມາໄດ້ສ້າງຜົນງານຢ່າງໂດດເດັ່ນໃນການເຂົ້າຮ່ວມແຂ່ງຂັນຍາດໄດ້ຫຼຽນຄຳໃນລະດັບຊີເກມ ແລະ ເປັນກິລາທີ່ມີຄວາມຫວັງຍາດເອົາຫຼຽນທອງ, ຫຼຽນເງິນ ສູ້ຊົນຍາດເອົາຫຼຽນຄຳ. ແຜນສົ່ງເຂົ້າຮ່ວມເອຊຽນເກມຄັ້ງທີ 18 ນັກກິລາຊາຍ 10 ຄົນ ແລະ ຍິງ 3 ຄົນ
4. ກິລາກາຣາເຕໂດ : ຜ່ານມາຍາດໄດ້ຫຼຽນຄຳໃນລະດັບຊີເກມຫຼາຍຄັ້ງ ແລະ ສາມາດຍາດໄດ້ຫຼຽນທອງໃນການແຂ່ງຂັນເອຊຽນເກມຄັ້ງທີ 17 ປີ 2014 ທີ່ອິນຊອນ ສ.ເກົາຫຼີ. ແຜນສົ່ງເຂົ້າຮ່ວມເອຊຽນເກມຄັ້ງທີ 18 ນັກກິລາເຂົ້າຮ່ວມການແຂ່ງຂັນຊາຍ 2 ຄົນ ແລະ ຍິງ 2 ຄົນ ຄາດໝາຍສູ້ຊົນຍາດເອົາຫຼຽນໃດໜຶ່ງ.
5. ກິລາມວຍສາກົນ : ເປັນກິລາທີ່ສ້າງຜົນງານໃຫ້ແກ່ຄະນະກິລາລາວ ຍາດໄດ້ຫຼຽນຄຳໃນຊີເກມແຕ່ລະຄັ້ງ, ເປັນກິລາທີ່ສ້າງປະຫວັດສາດໃຫ້ແກ່ວົງການກິລາລາວ ເຂົ້າຮ່ວມກິລາເອຊຽນເກມຄັ້ງທີ 11 ປີ 1990 ສາມາດຍາດໄດ້ 1 ຫຼຽນທອງ ທີ່ ສ.ປ ຈີນ ເປັນເຈົ້າພາບ ຄາດໝາຍສູ້ຊົນຍາດເອົາຫຼຽນໃດໜຶ່ງ.

Scanned with CamScanner

6. ກິລາເທຄວັນໂດ : ຜ່ານມາສາມາດຍາດໄດ້ຫຼຽນຄຳຫຼາຍຄັ້ງ ໃນການເຂົ້າຮ່ວມແຂ່ງຂັນຊີເກມ, ຊິງແຊ້ມອາຊີ ແລະ ຊິງແຊ້ມໂລກ (ນັກກິລາເຂົ້າຮ່ວມແຂ່ງຂັນຊາຍ 5 ຄົນ ແລະ ຍິງ 3 ຄົນ) ຄາດໝາຍສຸ້ຊິນຍາດເອົາຫຼຽນໃດໜຶ່ງ.
7. ກິລາຢູໂດ : ເປັນກິລາທີ່ສ້າງຜົນງານໃຫ້ແກ່ຄະນະກິລາລາວ ຍາດໄດ້ຫຼຽນຄຳຫຼາຍຄັ້ງ ໃນການເຂົ້າຮ່ວມແຂ່ງຂັນກິລາຊີເກມຜ່ານມາ ແລະ ເປັນກິລາທີ່ໄດ້ໂຄຕາສະສົມຄະແນນ ແລະໄດ້ເຂົ້າແຂ່ງຂັນກິລາໂອແລມປິກຢຸ່ລິໂອ ປະເທດບຣາຊິນ ປີ 2016 (ນັກກິລາເຂົ້າຮ່ວມແຂ່ງຂັນຊາຍ 3 ຄົນ ແລະ ຍິງ 3 ຄົນ) ຄາດໝາຍສຸ້ຊິນຍາດເອົາຫຼຽນໃດໜຶ່ງ.
8. ກິລາລິດຖິບ : ເປັນກິລາອີກປະເພດໜຶ່ງ ທີ່ໄດ້ສ້າງຜົນງານສາມາດຍາດໄດ້ຫຼຽນຄຳ 1 ຫຼຽນ ໃນການເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງທີ 27 ປີ 2013 ທີ່ປະເທດມຽນມາ ແລະ ໄດ້ຮັບໂຄຕາສະສົມຄະແນນໃນການເຂົ້າຮ່ວມແຂ່ງຂັນໃນລະດັບສາກົນ ແລະ ໄດ້ເຂົ້າແຂ່ງຂັນກິລາໂອແລມປິກ ຢຸ່ລິໂອ ປະເທດບຣາຊິນ ປີ 2016 (ນັກກິລາເຂົ້າຮ່ວມແຂ່ງຂັນຊາຍ 1 ຄົນ ແລະ ຍິງ 1 ຄົນ) ຄາດໝາຍສຸ້ຊິນຍາດເອົາຫຼຽນໃດໜຶ່ງ.
9. ກິລາແລ່ນ-ລານ ແລະ ລອຍນ້ຳ : ເປັນກິລາພາກບັງຄັບຂອງຄະນະກຳມະການໂອແລມປິກສາກົນ ແຕ່ລະປະເທດຈະຕ້ອງໄດ້ສົ່ງເຂົ້າຮ່ວມແຂ່ງຂັນ ແຕ່ສົ່ງຈຳນວນຈຳກັດ. ສຳລັບການແຂ່ງຂັນກິລາໂອແລມປິກແຕ່ລະຄັ້ງຜ່ານມາ ມີກິລາ 2 ປະເພດນີ້ໄດ້ຮັບໂຄຕາພິເສດໃນການແຂ່ງຂັນໂອແລມປິກ. (ນັກກິລາແລ່ນ-ລານເຂົ້າຮ່ວມແຂ່ງຂັນຊາຍ 2 ຄົນ ແລະ ຍິງ 2 ຄົນ, ນັກກິລາລອຍນ້ຳ ຊາຍ 1 ຄົນ ແລະ ຍິງ 1 ຄົນ).
10. ກິລາຍົກນ້ຳໜັກ : ເປັນກິລາເປົ້າໝາຍໃນການພັດທະນາເພື່ອເຂົ້າຮ່ວມແຂ່ງຂັນຊີເກມ, ເອຊຽນເກມ ແລະ ໂອແລມປິກເກມ ຜ່ານມາໄດ້ສ້າງກຽດຊື່ສຽງໃຫ້ແກ່ ສປປ ລາວ ໄດ້ຫຼຽນຄຳໃນຊີເກມຄັ້ງທີ 25 ປີ 2009 ທີ່ ສປປ ລາວ ຮັບກຽດເປັນເຈົ້າພາບ (ນັກກິລາຊາຍ 1 ຄົນ ແລະ ຍິງ 1 ຄົນ).
11. ກິລາຍິງທະນູ : ແມ່ນປະເພດກິລາເປົ້າໝາຍ ສຸ້ຊິນຍາດເອົາຫຼຽນໃນລະດັບສາກົນ ແລະ ຜ່ານມາປະສົບຜົນສຳເລັດສ້າງກຽດຊື່ສຽງໃຫ້ແກ່ ສປປ ລາວ ສາມາດຍາດໄດ້ຫຼຽນຄຳ ງານຊີເກມຄັ້ງທີ 27 ທີ່ມຽນມາ ປີ 2013 (ນັກກິລາເຂົ້າຮ່ວມແຂ່ງຂັນ ຊາຍ 1 ຄົນ ແລະ ຍິງ 1 ຄົນ).

II. ປະເພດກິລາ ທີ່ສະຫະພັນຮັບຜິດຊອບກຸ່ມຕົນເອງຮອບດ້ານໃນການກະກຽມ ແລະ ເຂົ້າຮ່ວມແຂ່ງຂັນຄັ້ງນີ້ມີ 9 ປະເພດກິລາ :

1. ກິລາຊອບເຫັນນິດ : ເປັນກິລາປະເພດໜຶ່ງ ທີ່ໄດ້ຈັດຕັ້ງເຄື່ອນໄຫວ ແລະ ເຂົ້າຮ່ວມແຂ່ງຂັນໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ມາແຕ່ປີ 2007 ຊຶ່ງໄດ້ຮັບການສະໜັບສະໜຸນງົບປະມານຈາກສະຫະພັນຊອບເຫັນນິດສາກົນ, ອາຊີ ແລະ ສະຫະພັນຊອບເຫັນນິດ ສ.ເກົາຫຼີ ປີ 2010.
2. ກິລາກ່ອຟ : ເປັນກິລາທີ່ສະຫະພັນ ແລະ ຜູ້ປົກຄອງໄດ້ລົງທຶນສ້າງນັກກິລາປະເພດນີ້ ໂດຍການສົ່ງໄປຝຶກຢູ່ຕ່າງປະເທດໄລຍະຍາວ ທັງຮຽນ ແລະ ຝຶກຊ້ອມກິລາໄປພ້ອມ.
3. ກິລາປິ່ງປ່ອງ : ເປັນກິລາ ທີ່ສ້າງກຽດຊື່ສຽງໃຫ້ແກ່ ສປປ ລາວ ໃນການເຂົ້າຮ່ວມແຂ່ງຂັນໃນເວທີສາກົນກ່ອນປະເທດຊາດໄດ້ຮັບການປົດປ່ອຍ ແລະ ເປັນກິລາທີ່ນິຍົມຂອງແຕ່ລະແຂວງມີສະໂມສອນພັດທະນາເປັນຂອງຕົນເອງ.
4. ກິລາບານເຕະ : ເປັນກິລາປະເພດໜຶ່ງ ທີ່ມີການເຄື່ອນໄຫວ ເຂົ້າຮ່ວມແຂ່ງຂັນໃນລະດັບຕ່າງໆ ທັງເປັນກິລາຍອດນິຍົມທີ່ສັງຄົມໃຫ້ຄວາມສົນໃຈ.
5. ກິລາຮັກບີ້ : ເປັນກິລາທີ່ມີການພັດທະນາ ແລະ ເຂົ້າຮ່ວມແຂ່ງຂັນລະດັບຊີເກມ ແລະ ເອຊຽນເກມ ໄລຍະຜ່ານມາ ທັງເປັນກິລາທີ່ໄດ້ຮັບການຊ່ວຍເຫຼືອຈາກສະຫະພັນຮັກບີ້ສາກົນມາໂດຍຕະຫຼອດ.

Scanned with CamScanner

6. ກິລາພາລາກຮາຍດິງ : ເປັນກິລາໃໝ່ທີ່ມີການເຄື່ອນໄຫວເຂົ້າຮ່ວມແຂ່ງຂັນໃນລະດັບອານຸພາກພື້ນ, ພາກພື້ນ ແລະ ສາກົນ ຜ່ານມາມີຜົນງານດີເດັ່ນໃນການເຂົ້າຮ່ວມແຂ່ງຂັນຊິງແຊັມອາຊຽນ.
7. ກິລາເຈສກີ່ : ເປັນກິລາທີ່ກໍ່ຕັ້ງຂຶ້ນໃໝ່ມີການເຄື່ອນໄຫວເຂົ້າຮ່ວມແຂ່ງຂັນໃນລະດັບອາຊຽນ ແລະ ອາຊີໄລຍະ ຜ່ານມາ.
8. ກິລາເບສບອນ : ເປັນກິລາໃໝ່ທີ່ໄດ້ຮັບການສະໜັບສະໜຸນ ຈາກສະຫະພັນເບສບອນສາກົນ ແລະ ສະຫະພັນ ເບສບອນ ຂອງ ສ. ເກົາຫຼີ ມີການຈັດຕັ້ງເຄື່ອນໄຫວເຂົ້າຮ່ວມແຂ່ງຂັນກັບປະເທດອາຊຽນ ແລະ ໄປຝຶກຊ້ອມ ແຂ່ງຂັນຢູ່ ສ.ເກົາຫຼີ ໃນໄລຍະຜ່ານມາ.
9. ກິລາຍິງປືນ : ເປັນກິລາປະເພດທີ່ສ້າງຊື່ສຽງໃຫ້ແກ່ຄະນະກິລາລາວ ໃນການເຂົ້າຮ່ວມແຂ່ງຂັນລະດັບຊີເກມຜ່ານມາ ສາມາດຍາດໄດ້ ຫຼຽນຄຳ.

ຫົວໜ້າກົມ

ກະຊວງສຶກສາທິການ ແລະ ກີລາ
ກົມກີລາລະດັບສູງ

ແສງພອນ ພົນອາມາດ

Scanned with CamScanner



Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມກິລາລະດັບສູງ

ເລກທີ 398 /ກສ
ນະຄອນຫຼວງວຽງຈັນ, ວັນທີ 04 ກໍລະກົດ 2018

ລາຍຊື່ນັກກິລາລາວ
ທີ່ໄດ້ຫຼຽນຈາກເອຊຽນເກມ ຄັ້ງທີ 18 ທີ່ເມືອງຈາກາຕ້າ ແລະ ປາແລມບັງ ປະເທດອິນໂດເນເຊຍ

ລຳດັບ	ປະເພດກິລາ	ລາຍການແຂ່ງຂັນ	ຊື່ ແລະ ນາມສະກຸນ	ປະເພດຫຼຽນ
I. ຫຼຽນເງິນ 02 ຫຼຽນ :				
1.	ກະຕໍ້	ທີມຄູ່ຊາຍ	1. ທ້າວ ໜຸ່ມ ສຸວັນນະລິດ 2. ທ້າວ ກັນຕະນາ ນັນທິເສນ 3. ທ້າວ ໂຍທິນ ສົມບັດພຸທອນ 4. ທ້າວ ກອງສີ ຢ່າງ 5. ທ້າວ ລັກສະນະໄຊ ບຸນໄພວັນ 6. ທ້າວ ຈັນທະລັກ ຈັນທະວົງ 7. ທ້າວ ພິດທະສັນ ບຸນປະເສີດ 8. ທ້າວ ໄຊບັນດິດ ທະດານາບຸດ 9. ທ້າວ ພອນສະຫວັນ ແກ້ວວິເສດ	ຫຼຽນເງິນ
2.	ປັນຈັກສີລັດ	ປະເພດຕໍ່ສູ້ລຸ້ນ 55–60 ກິໂລ	10. ນາງ ນ້ອງອ້ອຍ ວົງພັນດີ	ຫຼຽນເງິນ
II. ຫຼຽນທອງ 03 ຫຼຽນ :				
1.	ກະຕໍ້	ທີມຍິງ 4 ຄົນ	1. ນາງ ກ້ອຍ ໄຊຍະວົງ 2. ນາງ ນໍ່ຄຳ ວົງໄຊ 3. ນາງ ສອນສະຫວັນ ແກ້ວສຸລິຍາ 4. ນາງ ຈຽບ ບັນຊາວົງ 5. ນາງ ນວນດຳ ວໍລະບຸດ 6. ນາງ ສັນຕິສຸກ ຈັນດາລາ	ຫຼຽນທອງ
2.	ປັນຈັກສີລັດ	ປະເພດຕໍ່ສູ້ລຸ້ນ 50–55 ກິໂລ	1. ທ້າວ ໂປ້ ທຳມະວົງສາ	ຫຼຽນທອງ
3.	ປັນຈັກສີລັດ	ປະເພດຕໍ່ສູ້ລຸ້ນ 50–55 ກິໂລ	2. ນາງ ອໍລະໄທ ສຸນທະວົງ	ຫຼຽນທອງ

ຫົວໜ້າກົມ

ແສງພອນ ພົນອາມາດ

Rank	NOC	G	S	B	Total
1	China	132	92	65	289
2	Japan	75	56	74	205
3	Republic of Korea	49	58	70	177
4	Indonesia	31	24	43	98
5	Uzbekistan	21	24	25	70
6	IR Iran	20	20	22	62
7	Chinese Taipei	17	19	31	67
8	India	15	24	30	69
9	Kazakhstan	15	17	44	76
10	DPR Korea	12	12	13	37
11	Bahrain	12	7	7	26
12	Thailand	11	16	46	73
13	Hong Kong, China	8	18	20	46
14	Malaysia	7	13	16	36
15	Qatar	6	4	3	13
16	Mongolia	5	9	11	25
17	Vietnam	4	16	18	38
18	Singapore	4	4	14	22
19	Philippines	4	2	15	21
20	United Arab Emirates	3	6	5	14
21	Kuwait	3	1	2	6
22	Kyrgyzstan	2	6	12	20
23	Jordan	2	1	9	12
24	Cambodia	2	0	1	3

26	Macau, China	1	2	2	5
27	Iraq	1	2	0	3
28	Korea	1	1	2	4
28	Lebanon	1	1	2	4
30	Tajikistan	0	4	3	7
31	Lao PDR	0	2	3	5
32	Turkmenistan	0	1	2	3
33	Nepal	0	1	0	1
34	Pakistan	0	0	4	4
35	Afghanistan	0	0	2	2
35	Myanmar	0	0	2	2
37	Syria	0	0	1	1

Scanned with CamScanner

ຮຸບນັກກິລາທີ່ໄດ້ຮັບລາງວັນ

I. ຫຼຽນເງິນ:

1.ປັນຈັກສິລັດ (Pancak Silat) ລາຍການ ຕໍ່ສູ້ປະເພດຍິງ ລຸ້ນ 55-60 ກິໂລ

Pencak Silat

Silver

VONGPHAKDY Nong Oy

Women's Class C : 55kg to 60kg

2. ກະຕໍ້ (Sepak Takraw) ລາຍການທີມຄູ່ຊາຍ

Sepaktakraw

Silver

SOUVANNALITH Noum

Men's Team Doubles

SOMBATPUTHONE Yothin

Men's Team Doubles

THADANABOUTH Xaibandith

Men's Team Doubles

CHANTHAVONG Chanthalak

Men's Team Doubles

BOUNPASEUTH

BOUNPHAIVANH

Sepaktakraw

BOUNPASEUTH Phitthasanh

Men's Team Doubles

BOUNPHAIVANH Laksanaxay

Men's Team Doubles

NANTHISEN Kantana

Men's Team Doubles

KEOVISETH Phonsavanh

Men's Team Doubles

YANG Kongsy

Men's Team Doubles

Scanned with CamScanner

II. ຫຼຽນທອງ

1.ປັນຈັກສິລັດ ລາຍການຕໍ່ສູ້ ປະເພດຍິງ 50-55 ກິໂລ ແລະ ຊາຍ 50-55 ກິໂລ

Bronze

THAMMAVONGSA Bo

Men's Class B : 50kg to 55kg

SOUNTHAVONG Olathai

Women's Class B : 50kg to 55kg

2.ກະຕໍ້ ລາຍການ ທີມ 4 ຄົນ ປະເພດຍິງ

Sepaktakraw

Bronze

XAYAVONG Koy

Women's Quadrant

VONGXAY Norkham

Women's Quadrant

KEOSOULIYA Sonsavan

Women's Quadrant

BANXAVANG Chiep

Women's Quadrant

VOLABOUTH Nouandam

Women's Quadrant

CHANDALA Santisouk

Women's Quadrant

Scanned with CamScanner

ສາທະລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກພາບ ວັດທະນາຖາວອນ

=======

ກະຊວງສຶກສາທິການ ແລະ ກີລາ

ສະຫະພັນ ກີລາປັນຈັກສີລັດແຫ່ງຊາດ

ໂທ: 22208760,

ເລກທີ່. 126 ./ສປສ

ນະຄອນຫຼວງວຽງຈັນ, ວັນທີ່ 1 / 09 /2018.

ຮຽນ : ທ່ານ ຫົວໜ້າກົມກີລາລະດັບສູງ ທີ່ນັບຖື.

ເລື່ອງ : ຂໍລາຍງານ ໃນການເຂົ້າຮ່ວມງານແຂ່ງຂັນກີລາເອຊີເກມທີ່ປະເທດອິນໂດເນເຊຍ ເປັນເຈົ້າພາບນັບແຕ່ ວັນທີ່ 21 ຫາ 30 / 2018.

ຄະນະສະຫະພັນກີລາປັນຈັກສີລັດຂໍຖືເປັນກຽດຢ່າງສູງຮຽນສະເໜີມາຍັງ ທ່ານຫົວໜ້າກົມກີລາລະດັບສູງ ຊາບວ່າ:

ໃນການເຂົ້າຮ່ວມກີລາ ເອຊີເກມຄັ້ງທີ່ 18 ທີ່ປະເທດອິນໂດເນເຊຍເປັນເຈົ້າພາບມີນັກກີລາ ແລະ ຄະນະນຳເຂົ້າ ຮ່ວມທັງໝົດ 23 ຄົນ.

ຄະນະນຳນັກກີລາ ລວມມີ : 2 ທ່ານ.

ຄູຝຶກ 3 ທ່ານ ຄູຝຶກຕ່າງປະເທດ 1 ທ່ານ, ລາວ 2 ທ່ານ.

ນັກກີລາລາວທີ່ເຂົ້າຮ່ວມ ງານແຂ່ງຂັນເອຊີເກມຄັ້ງນີ້ມີທັງໝົດ 17ຄົນ, ຊາຍ 12 ຄົນ ຍິງ 5 ຄົນ.

ລວມຫຼຽນທີ່ໄດ້ຮັບໃນງານເຂົ້າຮ່ວມແຂ່ງຂັນຄັ້ງນີ້ : 1 ຫຼຽນເງິນ, 2 ຫຼຽນທອງ.

1. ນາງ ນ້ອງອ້ອຍ ວົງພັກດີ 1 ຫຼຽນ ເງິນ
2. ນາງ ອໍລະໄທ ສູນທະວົງ 1 ຫຼຽນ ທອງ
3. ທ້າວ ໂບ ທຳມະວົງສາ 1 ຫຼຽນ ທອງ

ດັ່ງນັ້ນ ທາງຄະນະສະຫະພັນກີລາປັນຈັກສີລັດ ຂໍຮຽນສະເໜີມາຍັງທ່ານຫົວໜ້າກົມກີລາລະດັບສູງ ຊ່ວຍພິຈາລະນາ ເລື່ອງການຍ້ອງຍໍ ແລະ ເງິນອັດຊີດໃຫ້ຄະນະນຳແລະນັກກີລາ ຕາມ ຄວາມເມາະສົມດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ຄະນະສະຫະພັນປັນຈັກສີລັດ.

ກະຊວງສຶກສາທິການ ແລະ ກີລາ ສ.ປ.ສ LAO PANCAKSILAT FEDERATION

ຮ່ນເຫຼືອນ ສີວົາສົດ

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະພັນກິລາກະຕໍ້ ແລະ ຊີນລອນແຫ່ງຊາດລາວ

ເລກທີ ๐.๒๔... /ສກລ
ນະຄອນຫຼວງວຽງຈັນ, ວັນທີ....๔.. ກັນຍາ 2018

ລາຍຊື່ຄະນະນຳ, ຄູຝຶກ ແລະ ນັກກິລາກະຕໍ້ ຊາຍ - ຍິງ
ທີ່ໄດ້ຮັບຫຼຽນຈາກການແຂ່ງຂັນ ເອຊ່ຽນເກມຄັ້ງທີ 18 ທີ່ປະເທດອິນໂດເນເຊຍ ປີ 2018

ລ/ດ	ໜ້າທີ່ຮັບຜິດຊອບ	ລາຍການແຂ່ງຂັນ ກະຕໍ້	ຊື່ ແລະ ນາມສະກຸນ	ປະເພດຫຼຽນ
1	ຄະນະນຳ ແລະ ຄູຝຶກ		1. ທ່ານ ອານຸສອນ ເຄນກິຕິສັກ (ຜູ້ຈັດການທີມ) 2. ທ່ານ ນາງ ວິໄລວອນ ແສງຕາ(ຜູ້ຈັດການທີມ) 3. ທ່ານ ນາງ ໂນລີ ຂາມຸນຕີ (ຄູຝຶກ) 4. ທ່ານ ຈັດໄດ ເພຍເທບ (ຄູຝຶກ) 5. ທ່ານ ສົມໃຈ ແກ້ວປະເສີດ (ຄູຝຶກ) 6. ທ່ານ ວິລະວຸດ ລັກສະໝີ ວົງ (ຄູຝຶກ) 7. ທ່ານ ລົນຣນາລົງ ເຈນໄຊຍາພູມີ (ຄູຝຶກ)	
2	ນັກກິລາ ກະຕໍ້	ທີມຄູ່ຊຸດ (ຊາຍ)	1. ທ້າວ ໜຸ່ມ ສຸວັນນະດີ(ນັກກິລາ) 2. ທ້າວກັນຕະນານານທະເສນ(ນັກກິລາ) 3. ທ້າວພອນສະຫັວນແກ້ວວິເສດ(ນັກກິລາ) 4. ທ້າວກອງສີຢ່າງ(ນັກກິລາ) 5. ທ້າວລັກສະນະໄຊບຸນໄພວັນ(ນັກກິລາ) 6. ທ້າວໄຊບັນດິດທາດານາບຸດ(ນັກກິລາ) 7. ທ້າວຈັນທະລັກຈັນທະວົງ(ນັກກິລາ) 8. ທ້າວພິດທະສັນບຸນປະເສີດ(ນັກກິລາ) 9. ທ້າວໂຍທິນສົມບັດພູທອນ(ນັກກິລາ)	ຫຼຽນເງິນ
3	ນັກກິລາ ກະຕໍ້	ທີມ 4 ຄົນ (ຍິງ)	1. ນາງກ້ອຍໄຊຍະວົງ(ນັກກິລາ) 2. ນາງນໍຄຳວົງໄຊ(ນັກກິລາ) 3. ນາງຈຽບບັນຊາວັງ(ນັກກິລາ) 4. ນາງນອນດຳວໍລະບຸດ(ນັກກິລາ) 5. ນາງສັນຕິສຸກຈັນດາລາ(ນັກກິລາ) 6. ນາງສອນສະຫວັນແກ້ວສຸລິຍາ (ນັກກິລາ)	ຫຼຽນທອງແດງ

ປະທານສະຫະພັນກິລາກະຕໍ້ ແລະ ຊີນລອນແຫ່ງຊາດລາວ

ສ.ກ.ລ
LAO SEPAKTAKRAW FEDERATION

ອານຸສອນ ເຄນກິຕິສັກ
Anousone KHENKITISACK

Scanned with CamScanner